# ຄຄຊ ຝຶກອົບຮົມການວິເຄາະຮຸ້ນຂັ້ນພື້ນຖານໃຫ້ມອນຊິນຈາກພາກລັດ ແລະເອກະຊົນ




ຄະນະກຳມະການຄຸ້ມຄອງຫລັກຊັບ(ຄຄຊ)ໄດ້ຈັດຝຶກອົບຮົມການວິເຄາະຮຸ້ນດ້ວຍປັດໃຈພື້ນຖານໃຫ້ແກ່ບັນດາມອນຊິນທົ່ວໄປ, ພະນັກງານລັດ, ເອກະຊົນ, ສະຖາບັນການເງິນ, ທະນາຄານ ແລະວິສາຫະກິດຕ່າງໆ ຂຶ້ນໃນວັນທີ 26 ກໍລະກົດ 2022 ນີ້ທີ່ສະໂມສອນທະນາຄານແຫ່ງສປປ ລາວ, ສາຂາຫລວງພະບາງ ໂດຍການເປັນປະທານຮ່ວມຂອງ ທ່ານ ນາງ ພຸດດາວັນ ສິຣິສິມບັດ ຮອງຫົວໜ້າສາຂາ ທຫລ ພາກເໜືອ ແຂວງຫລວງພະບາງ, ທ່ານ ສຽວສະຫວາດ ທີລະກຸນ ຮອງຫົວໜ້າສຳນັກງານ ຄຄຊ, ມີອຳນວຍການບໍລິສັດຫລັກຊັບ ທຄຕລ-ກທ ຈຳກັດ, ພ້ອມດ້ວຍຄູຝຶກແລະສຳມະນາກອນຈາກພາກລັດ ແລະເອກະຊົນເຂົ້າຮ່ວມ.

ທ່ານ ນາງ ພຸດດາວັນ ສິຣິສິມບັດ ຮອງຫົວໜ້າສາຂາ ທຫລ ພາກເໜືອ, ແຂວງຫຼວງພະບາງ ກ່າວວ່າ: ການວິເຄາະຮຸ້ນດ້ວຍປັດໃຈພື້ນຖານ”(The Fundamental Analysis on Stock)”ໃຫ້ບັນດາຜູ້ຕາງໜ້າຈາກພະແນກການຕ່າງໆ, ສະຖາບັນການເງິນ, ທະນາຄານທຸລະກິດລັດ ແລະ ເອກະຊົນ ແລະ ບັນດາວິສາຫະກິດ ຢູ່ໃນແຂວງຫຼວງພະບາງ ຄັ້ງນີ້ແມ່ນມີຄວາມໝາຍສຳຄັນຫຼາຍ ແລະ ແຕ່ລະພາກສ່ວນຈະໄດ້ຮຽນຮູ້ວຽກງານຕະຫຼາດທຶນ ເຖິງວ່າຕະຫຼາດທຶນລາວມີການພັດທະນາມາໄດ້ໄລຍະໜຶ່ງແລ້ວກໍ່ຕາມ, ແຕ່ຫຼາຍພາກສ່ວນ ກໍ່ຍັງບໍ່ທັນມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບວຽກງານຕະຫຼາດທຶນ. ດ້ວຍເຫດນີ້ ການເຜີຍແຜ່

ຄວາມຮູ້ ແລະສ້າງຄວາມເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນໃຫ້ແກ່ບັນດາພະແນກການຕ່າງໆ, ສະຖາບັນການເງິນ, ທະນາຄານທຸລະກິດລັດ ແລະ ເອກະຊົນ ແລະບັນດາວິສາຫະກິດ ກໍ່ຄື ມວນຊົນທົ່ວໄປ ຈຶ່ງເປັນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນຢ່າງຍິ່ງໃນການການສ້າງຄວາມຮູ້ຄວາມເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນໃຫ້ມວນຊົນໄດ້ຮັບຊາບເປັນວົງກ້ວາງ ແລະລົງເລິກສະເພາະດ້ານກ່ຽວກັບວຽກງານການວິເຄາະ ແລະເພື່ອໃຫ້ສາມາດນຳໃຊ້ການຈັດຕັ້ງປະຕິບັດໜ້າທີ່ວຽກງງານໃນຂະແໜງການຕ່າງໆໃຫ້ມີຄວາມຄ່ອງຕົວ.

ຊຸດຝຶກອົບຮົມໃນຄັ້ງນີ້ຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການບັນຍາຍຈາກຄູຝຶກທີ່ມີປະສົບການດ້ານການວິ ເຄາະຮຸ້ນ, ຜົນປະໂຫຍດໃນການລົງທຶນໃນຮຸ້ນສາມັນ,ການປະເມີນມູນຄ່າຮຸ້ນ ແລະກິດຈະກຳຖາມ-ຕອບ ບັນຫາຕ່າງໆທີ່ບໍ່ເຂົ້າໃຈເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຮັບຄວາມຮູ້ໃໝ່ໆຂອງການວິເຄາະຮຸ້ນແບບພື້ນຖານ ໃຫ້ມີຄວາມເຂົ້າໃຈ.





ຮັກບ້ານເກີດເມືອງນອນ ໃຊ້ຈ່າຍທອນເປັນເງິນກີບ